SOUTHERN LAOS

Charming by nature

# ຄູ່ມືແນະນຳກ່ຽວກັບການຖ່າຍຮູບ

# ລັກສະນະພິເສດຂອງລາວພາກໃຕ້

ເອກະສານຄູ່ມືແນະນຳກ່ຽວກັບການຖ່າຍຮູບສະບັບນີ້ ຈະຊ່ວຍບອກທິດທາງ ໃຫ້ແກ່ຊ່າງພາບໃຫ້ສາມາດນຳເອົາຈຸດໂດດເດັ່ນ ຂອງລາວພາກໃຕ້ອອກມານຳສະເໜີ ເມື່ອເວລາຖ່າຍພາບ. ເອກະລັກສະເພາະທັງສີ່ ດ້ານລຸ່ມນີ້ ຈະອະທິບາຍໃຫ້ເຫັນເຖິງວັດທະນະທຳຂອງສັນຍາລັກ ຂອງລາວພາກໃຕ້:

**ຄວາມຫຼາກຫຼາຍຂອງພາກພື້ນ**

ລາວພາກໃຕ້, ຍັງມີຄວາມຫຼາກຫຼາຍທີ່ເຊື່ອງຊ້ອນໃຫ້ຄົ້ນຫາ. ສິ່ງນີ້ໝາຍເຖິງ ປະຫວັດສາດ ແລະ ວັດທະນະທຳ ຂອງພາກພື້ນ ແລະ ສິ່ງແວດລ້ອມທາງທຳມະຊາດ.

**ຄວາມງຽບສະຫງົບຕາມທຳມະຊາດ**

ວັດທະນະທຳ ແລະ ສິ່ງແວດລ້ອມຂອງພາກພື້ນ ເຮັດໃຫ້ລາວພາກໃຕ້ມີຄວາມດຶງດູດທີ່ຍາກຈະປະຕິເສດ - ເຖິງວ່າຈະເປັນມາດຕະຖານຂອງລາວ.

**ສະເໜ່ຂອງລາວພາກໃຕ້**

ຄວາມໃຈກ້ວາງ, ເອື້ອເຟື້ອເພື່ອແຜ່ ແລະ ຄວາມເປັນທຳມະຊາດຂອງຄົນລາວພາກໃຕ້ ທີ່ເຮັດໃຫ້ຜູ້ມາຢ້ຽມຢາມໄດ້ຮັບການຕ້ອນຮັບຢ່າງອົບອຸ່ນ.

**ສະບາຍ ສະບາຍ**

ຢູ່ລາວພາກໃຕ້ ເຮົາມີເວລາພໍສຳລັບເຮັດທຸກສິ່ງທຸກຢ່າງ - ໂດຍສະເພາະຖ້າຫາກວ່າທ່ານຕ້ອງການມາພັກຜ່ອນ ແລະ ໃຊ້ຊີວິດແບບຜ່ອນຄາຍ. ທ່ານບໍ່ຈຳເປັນຕ້ອງຈັດແຜນການທ່ອງທ່ຽວແບບຊົ່ວໂມງຕໍ່ຊົ່ວໂມງ.

# ການບັນທຶກພາບລາວພາກໃຕ້

ເພື່ອໃຫ້ຮູບພາບຂອງລາວພາກໃຕ້ມີຄວາມໂດດເດັ່ນທີ່ສຸດ, ທັງສີ່ອົງປະກອບນີ້ຄວນໄດ້ຮັບການບັນທຶກລົງໃນຮູບພາບ:

## **ຄົນ**

ທຸກຄັ້ງທີ່ຖ່າຍຮູບຄົນ, ຄວນເກັບພາບຂອງຄົນລາວທີ່ມີຮອຍຍິ້ມເປັນທຳມະຊາດທີ່ສຸດ. ຜູ້ທີ່ຖືກຖ່າຍຮູບສາມາດແນມເບິ່ງກ້ອງໄດ້, ຖ້າຕ້ອງການ. ຮູບພາບດັ່ງກ່າວຄວນສື່ເຖິງຄວາມມີສະເໜ່ ແລະ ບຸກຄະລິກຂອງຄົນລາວພາກໃຕ້ທີ່ມີຄວາມຍິ້ມແຍ້ມແຈ່ມໃສ ເພື່ອຕ້ອນຮັບນັກທ່ອງທ່ຽວທຸກຄົນ.

ຖ້າເປັນໄປໄດ້, ຜູ້ທີ່ຖືກຖ່າຍຮູບຄວນຈະກຳລັງເຮັດກິດຈະກຳໃດໜຶ່ງຢູ່ ທີ່ສະແດງໃຫ້ເຫັນເຖິງວິຖີຊີວິດຂອງຄົນລາວພາກໃຕ້ ເຊັ່ນ ການຕຳຫູກດ້ວຍມືແບບດັ້ງເດີມ, ການກ່ຽວເຂົ້າ ຫຼື ການຫາປາ.

## **ວັດທະນະທຳ**

ຮູບພາບຄວນສື່ເຖິງຄວາມຫຼາກຫຼາຍຂອງມໍລະດົກທາງວັດທະນະທຳທີ່ອຸດົມສົມບູນຂອງລາວພາກໃຕ້ ແລະ ປະສົບການທາງວັດທະນະທຳ. ສຳລັບ ສະຖານທີ່ຖ່າຍຮູບ ຄວນຈະເລືອກເກັບຮູບພາບໃນຕອນເຊົ້າ ຫຼື ຕອນຄ້ອຍແລງ.

**ທຳມະຊາດ**

ຮູບພາບຄວນສື່ໃຫ້ເຫັນເຖິງຄວາມສະຫງົບ ແລະ ເນັ້ນໃສ່ທຳມະຊາດທີ່ຍັງບໍ່ທັນຖືກສຳພັດ.

ການຖ່າຍຮູບຄວນສະແດງໃຫ້ເຫັນເຖິງຄວາມຫຼາກຫຼາຍຂອງສັດ ແລະ ສິ່ງແວດລ້ອມ. ເນັ້ນໃຫ້ເຫັນເຖິງຄວາມງາມ ແລະ ຄວາມແຕກຕ່າງຂອງທຳມະຊາດ - ນັບຕັ້ງແຕ່ ຄວາມໜ້າຕື່ນຕາຕື່ນໃຈຂອງນ້ຳຕົກສູງ ໄປຫາ ການໄຫຼຂອງສາຍນ້ຳທີ່ສະຫງົບງຽບ, ຄວາມໜາແໜ້ນຂອງປ່າໄມ້ທ່າມກາງພູເຂົາສູງ ໄປຫາ ຄວາມຮົ່ມເຢັນຂອງສວນກາເຟ ແລະ ສວນຊາ.

**ການພະຈົນໄພ**

ຮູບຖ່າຍຄວນສະແດງໃຫ້ເຫັນໃນສອງລັກສະນະ: ກິດຈະກຳກາງແຈ້ງແບບຜ່ອນຄາຍ ແລະ ກິດຈະກຳໂລດໂຜນທີ່ໜ້າຕື່ນເຕັ້ນ. ຊຶ່ງໃນທັງສອງກໍລະນີ, ຄວນສອດແຊກປະສົມປະສານທັດສະນີຍະພາບທຳມະຊາດ ແລະ ຄຸນລັກສະນະທີ່ນິຍາມຄວາມເປັນລາວພາກໃຕ້ເປັນຮູບສາກຫຼັງຂອງບັນດາກິດຈະກຳດັ່ງກ່າວ.

## ຄົນ







## ວັດທະນະທຳ





## ທຳມະຊາດ







## ການພະຈົນໄພ







# ຮູບແບບການຖ່າຍຮູບຂອງລາວພາກໃຕ້

### ສິ່ງທີ່ຄວນເຮັດ

- ການນຳສະເໜີຄວາມຫຼາກຫຼາຍ
- ສື່ໃຫ້ເຫັນເຖິງສັນຕິ ແລະ ຄວາມງຽບສະຫງົບ
- ສະແດງໃຫ້ເຫັນເຖິງຄວາມຍິ້ມແຍ້ມແຈ່ມໃສ
- ການເຊີນຊວນ ແລະ ຄວາມມີສະເໜ່ອັນໜ້າດຶງດູດ
- ຄວາມເປັນທຳມະຊາດ

### ສິ່ງທີ່ບໍ່ຄວນເຮັດ

- ຄວາມໜາແໜ້ນຂອງນັກທ່ອງທ່ຽວ (ຮູບພາບໃນຫົວຂໍ້ການພະຈົນໄພ ຄວນສະແດງໃຫ້ເຫັນນັກທ່ອງທ່ຽວໜຶ່ງຫາສອງຄົນຕໍ່ຮູບ)
- ເບິ່ງຄືມີສຽງດັງ
- ສະແດງໃຫ້ເຫັນຄວາມເປັນທຸລະກິດ